ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0221/ອຄ.

ນະຄອນຫຼວງວຽງຈັນ, ວັນທີ 13 FEB 2007

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳ
## ປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 01/99/ສພຊ, ລົງວັນທີ່ 3/4/99 ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 67/ນຍ, ລົງວັນທີ່ 12/4/06.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ່ 17/8/06 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ, ລົງວັນທີ່ 23/8/06 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້, ການທຸລະກິດໄມ້ ແລະ ສົ່ງເສີມອຸດສາຫະກຳປຸງແຕ່ງໄມ້ ເປັນຜະລິດຕະພັນສຳເລັດຮູບ.

ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງ ແລະ ດັດສົມການເຄື່ອນໄຫວກິດຈະການ ຂອງບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ່ 31/ນຍ, ລົງວັນທີ່ 23/8/06 ໃຫ້ມີຄວາມເປັນລະບຽບຮຽບຮ້ອຍດີ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ I
## ຫຼັກການທົ່ວໄປ

ມາດຕາ 1: ຈຸດປະສົງ

1.1 ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ. ໂດຍນຳໃຊ້ຊັບພະຍາກອນໄມ້ໃຫ້ເກີດຜົນປະໂຫຍດສູງສຸດດ້ວຍການສ້າງມູນຄ່າເພີ່ມ ແລະ ສ້າງລາຍຮັບ ຂອງຊາດໃຫ້ນັບມື້ຫຼາຍຂຶ້ນ ຈາກການປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ.

1.2 ເພື່ອຊຸກຍູ້, ສົ່ງເສີມ, ຄຸ້ມຄອງ, ກວດກາ ແລະ ຕິດຕາມ ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ໃຫ້ເຄື່ອນໄຫວດຳເນີນທຸລະກິດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງໂຮງງານ ແລະ ລະບຽບກົດໝາຍ ອື່ນໆທີ່ກ່ຽວຂ້ອງ.

1.3 ເພື່ອກຳນົດວິທີການ ແລະ ມາດຕະການຕ່າງໆໃນການຄຸ້ມຄອງມະຫາພາກຕໍ່ກັບໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ທຸກປະເພດ, ທຸກລະດັບ ລວມທັງມາດຕະຖານທາງດ້ານເຕັກນິກຂອງ ໂຮງງານ ແລະ ຂະບວນການປຸງແຕ່ງໄມ້ແນ່ໃສ່ໃຫ້ມີຄວາມເປັນເອກະພາບກັນ ຢູ່ໃນຂອບເຂດ ທົ່ວປະເທດ.

**<u>ມາດຕາ 2:</u> ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ເພື່ອການຄຸ້ມຄອງ ແລະ ຕິດຕາມ ການເຄື່ອນໄຫວກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ທຸກປະເພດ, ທຸກລະດັບ ໃນຂອບເຂດທົ່ວປະເທດ.

**<u>ມາດຕາ 3:</u> ຄຳນິຍາມ**

ໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ທີ່ກຳນົດປະເພດໂຮງງານໃນມາດຕາ 9 ຂໍ້ 2 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໝາຍເຖິງ ໂຮງງານທີ່ນຳໃຊ້ວັດຖຸດິບໄມ້ເປັນຕົ້ນຕໍ ເຊັ່ນ: ໄມ້ທ່ອນ, ໄມ້ກິ່ງງ່າ, ເຫງົ້າໄມ້, ປູດໄມ້, ຕໍໄມ້, ຫວາຍ ແລະ ໄມ້ປ່ອງ ເຂົ້າຜ່ານຂະບວນການປຸງແຕ່ງ ປ່ຽນຈາກສະພາບເດີມ ມາເປັນຜະລິດຕະພັນໄມ້ສຳເລັດຮູບດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ພາຍໃນໂຮງງານ, ຊຶ່ງຜະລິດຕະພັນເຫຼົ່ານັ້ນສາມາດເອົາໄປຈຳໜ່າຍເປັນສິນຄ້າໄດ້. ແລະ ໂຮງງານດັ່ງກ່າວໄດ້ຈັດເຂົ້າໃນເລກລະຫັດ (ISIC) 2010, 2021, 2022, 2023, 2024, 2029, 2101 ແລະ 3610 ຂອງການຈັດປະເພດອຸດສາຫະກຳ ຕາມຂໍ້ຕົກລົງເລກທີ່ 108/ອຫ, ລົງວັນທີ່ 21/2/92.

<u>ມາດຕາ 4:</u> ປະເພດໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ

ໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ແບ່ງອອກເປັນສາມປະເພດ ຄື:

4.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະເພດໜຶ່ງ ໝາຍເຖິງ ໂຮງງານເລື່ອຍໄມ້ (ເລກລະຫັດ 2010) ດ້ວຍກຳມະວິທີການປຸງແຕ່ງ ທີ່ນຳໃຊ້ເຄື່ອງຈັກເລື່ອຍສາຍພານທາງນອນ, ເຄື່ອງຈັກເລື່ອຍສາຍພານທາງຕັ້ງ, ເຄື່ອງຈັກເລື່ອຍວົງເດືອນ, ເຄື່ອງຈັກຕັດວົງເດືອນ ເປັນຕົ້ນຕໍ ເພື່ອເປົ້າໝາຍເລື່ອຍໄມ້ທ່ອນ ໃຫ້ເປັນໄມ້ແປຮູບ ຫຼື ໄມ້ເລື່ອຍ ເພື່ອສະໜອງໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະເພດສອງ ແລະ ປະເພດສາມ.

4.2. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະເພດສອງ ໝາຍເຖິງ ໂຮງງານປຸງແຕ່ງໄມ້ສຳເລັດຮູບ (ເລກລະຫັດ 2021, 2022 ແລະ 2024) ດ້ວຍກຳມະວິທີການປຸງແຕ່ງແບບອຸດສາຫະກຳ ໂດຍນຳໃຊ້ເຄື່ອງຈັກຂະໜາດໃຫຍ່ ເຊັ່ນ: ເຄື່ອງຈັກເລື່ອຍ, ເຄື່ອງຈັກປອກຝານ, ເຄື່ອງຈັກບິດ, ເຄື່ອງຈັກທີ່ຈຳເປັນອື່ນໆ ແລະ ຜ່ານຂະບວນການອົບແຫ້ງ ເພື່ອເປົ້າໝາຍປຸງແຕ່ງເປັນຜະລິດ ຕະພັນ ເຊັ່ນ: ໄມ້ອັດ (ໄມ້ອັດປະສານ, ໄມ້ອັດຈາກເສດໄມ້ (particle board) ແລະ ໄມ້ອັດອື່ນໆ), ໄມ້ປອກຝານ, ໄມ້ປັກເກ, ຜະລິດເຄື່ອງໄມ້ທີ່ໃຊ້ໃນການກໍ່ສ້າງ ແລະ ເຄື່ອງປະກອບໃນອາຄານ (ໄມ້ວົງກົບ, ໄມ້ບານປະຕູ, ໄມ້ບານປ່ອງຢ້ຽມ, ໄມ້ເຊາະຮ່ອງ, ໄມ້ເຂົ້າຫຼີ້ມ, ແປ້ນຂັ້ນໄດ, ຮາວພະນັກ

ງານອຸດສາຫະກຳປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມ ເປັນຜະລິດຕະພັນໄມ້ສຳເລັດຮູບ.

4.3. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ປະເພດສາມ ໝາຍເຖິງ ໂຮງງານເຟີນີເຈີ ແລະ ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້ (ເລກລະຫັດ 2023, 2029, 2101 ແລະ 3610) ດ້ວຍກຳມະວິທີການປຸງແຕ່ງ ໂດຍນຳໃຊ້ເຄື່ອງຈັກຕັດໄມ້, ເຄື່ອງຈັກຊອຍໄມ້, ເຄື່ອງຈັກກົບໄມ້, ເຄື່ອງຈັກສາກໄມ້, ເຄື່ອງຈັກຂຶ້ນຮູບລວດລາຍ, ເຄື່ອງຈັກເຈາະໄມ້, ເຄື່ອງຈັກຊຸ່ນໄມ້, ເຄື່ອງຈັກຂັດກະດາດຊາຍ ແລະ ນຳໃຊ້ແຮງງານຄົນເປັນສ່ວນໃຫຍ່ ເພື່ອເປົ້າໝາຍປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ເປັນຜະລິດຕະພັນສຳເລັດຮູບ ເຊັ່ນ: ພາຊະນະໄມ້ (ຫີບ, ກ່ອງ, ລັງ, ຖັງ, ພັລເລັດ(Pallete), ແກນມ້ວນສາຍເຄເບິ້ນ), ໂຕະ, ຕັ່ງ, ຕູ້, ຕຽງ, ເຄື່ອງຕົບແຕ່ງ, ເຄື່ອງແກະສະລັກ, ເຄື່ອງປະດັບເອ້, ຂອບຮູບ, ເຄື່ອງໃຊ້ສອຍ ແລະ ເຄື່ອງຫັດຖະກຳໄມ້ອື່ນໆ ເພື່ອເປັນສິນຄ້າຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

## ໝວດທີ II

## ລະດັບ ແລະ ມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ

<u>ມາດຕາ 5</u>: ລະດັບໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ

ໂຮງງານອຸດສາຫະກຳປຸງແຕ່ງໄມ້, ຫວາຍ ແລະ ໄມ້ປ່ອງ ໄດ້ແບ່ງອອກເປັນ 3 ລະດັບ ຕາມທີ່ລະບຸໄວ້ຢູ່ມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ດັ່ງລາຍລະອຽດລຸ່ມນີ້:

5.1. ໂຮງງານລະດັບ 1: ແມ່ນໂຮງງານທີ່ນຳໃຊ້ກຳລັງແຮງເຄື່ອງຈັກເກີນກວ່າ 200 ແຮງມ້າຂຶ້ນໄປ ຫຼື ກຳລັງແຮງງານຄົນ ເກີນກວ່າ 200 ຄົນຂຶ້ນໄປ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມສູງ.

5.2. ໂຮງງານລະດັບ 2: ແມ່ນໂຮງງານທີ່ນຳໃຊ້ກຳລັງແຮງເຄື່ອງຈັກ ແຕ່ 51 ຫາ 200 ແຮງມ້າ ຫຼື ກຳລັງແຮງງານຄົນ ແຕ່ 51 ຫາ 200 ຄົນ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມປານກາງ.

5.3. ໂຮງງານລະດັບ 3: ແມ່ນໂຮງງານທີ່ນຳໃຊ້ກຳລັງແຮງເຄື່ອງຈັກ ແຕ່ 5 ຫາ 50 ແຮງມ້າ ຫຼື ກຳລັງແຮງງານຄົນ ແຕ່ 10 ຫາ 50 ຄົນ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມຕ່ຳ.

<u>ມາດຕາ 6</u>: ມາດຕະຖານທຶນຈົດທະບຽນໂຮງງານອຸດສາຫະກຳປຸງແຕ່ງໄມ້

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ສາມລະດັບ ຕາມທີ່ລະບຸໄວ້ຢູ່ມາດຕາ 5 ຂອງ ຂໍ້ຕົກລົງສະບັບນີ້ ຕ້ອງມີທຶນຈົດທະບຽນທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ.

<u>ມາດຕາ 7</u>: ມາດຕະຖານຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້

ໂດຍອີງໃສ່ລະບຽບການລວມກ່ຽວກັບມາດຕະຖານຂອງໂຮງງານອຸດສາຫະກຳປຸງແຕ່ງ, ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງມີມາດຕະຖານລະອຽດດັ່ງນີ້:

7.1. ມາດຕະຖານດ້ານສະຖານທີ່ຕັ້ງ ແລະ ເນື້ອທີ່ໂຮງງານ

7.1.1. ສະຖານທີ່ຕັ້ງໂຮງງານ: ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕ້ອງຕັ້ງຢູ່ນອກເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ ແລະ ຕ້ອງຢູ່ສະຖານທີ່ກວ້າງຂວາງ, ບໍລິເວນໂຮງງານຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມກັບກິດຈະການ, ການຂົນສົ່ງສະດວກສະບາຍບໍ່ກີດຂວາງການສັນຈອນໄປມາ ທັງຮັບປະກັນຄວາມປອດໄພ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງ

ສໍາລັບໂຮງງານທີ່ຕັ້ງຢູ່ໃນສະຖານ ທີ່ບໍ່ເໝາະສົມ ຕ້ອງໄດ້ຍົກຍ້າຍໄປຢູ່ເຂດອຸດສາຫະກໍາ ຫຼື ສະຖານທີ່ອື່ນ ຕາມຄວາມເໝາະສົມ.

7.1.2. ເນື້ອທີ່ໂຮງງານ:

- ໂຮງງານປຸງແຕ່ງໄມ້ລະດັບ 1 ຕ້ອງມີເນື້ອທີ່ບໍລິເວນໂຮງງານ 10.000 ຕາແມັດ ຂຶ້ນໄປ.
- ໂຮງງານປຸງແຕ່ງໄມ້ລະດັບ 2 ຕ້ອງມີເນື້ອທີ່ບໍລິເວນໂຮງງານ 8.000 ຕາແມັດ ຂຶ້ນໄປ.
- ໂຮງງານປຸງແຕ່ງໄມ້ລະດັບ 3 ຕ້ອງມີເນື້ອທີ່ບໍລິເວນໂຮງງານ 6.000 ຕາແມັດ ຂຶ້ນໄປ.

ໂຮງງານທັງສາມລະດັບດັ່ງກ່າວນີ້ ຕ້ອງປະກອບມີ: ຫ້ອງການບໍລິຫານ, ອາຄານປຸງແຕ່ງໄມ້, ສາງ, ສະຖານທີ່ເກັບມ້ຽນວັດຖຸດິບ ແລະ ຜະລິດຕະພັນສໍາເລັດຮູບ, ເຕົາອົບໄມ້, ອ່າງແຊ່ໄມ້, ລະບົບກໍາຈັດ ແລະ ບໍາບັດສິ່ງເສດເຫຼືອຈາກໂຮງງານ; ຈັດໃຫ້ມີສິ່ງອໍານວຍຄວາມສະດວກໃຫ້ແກ່ຄົນງານ ເຊັ່ນ: ບ່ອນພັກເຊົາຄົນ ງານ, ຫ້ອງນໍ້າ ແລະ ອາຄານອື່ນໆທີ່ຈໍາເປັນ.

7.1.3. ຕ້ອງມີລະບົບໄຟຟ້າ ທີ່ມີໝໍ້ແປງເປັນຂອງໂຮງງານເອງ ແລະ ມີລະບົບນໍ້າໃຊ້ (ນໍ້າປະປາ ຫລື ນໍ້າບາດານ) ໃຊ້ຢ່າງພຽງພໍ.

## 7.2. ມາດຕະຖານດ້ານອາຄານໂຮງງານ

7.2.1. ອາຄານໂຮງງານປຸງແຕ່ງໄມ້ທຸກລະດັບ ຕ້ອງເປັນໂຄງສ້າງທີ່ແໜ້ນໜາແຂງແຮງ, ເສົາ ເຮັດດ້ວຍເບຕົງ, ເສົາເຫຼັກ ຫຼື ເສົາໄມ້ທີ່ທົນທານຖາວອນ, ພື້ນເຮັດດ້ວຍເບຕົງ, ມຸງດ້ວຍກະເບື້ອງ ຫຼື ສັງກະສີ; ຄວາມສູງແຕ່ພື້ນຫາເພດານບໍ່ຕໍ່າກວ່າ 4 ແມັດ ໂດຍກໍ່ສ້າງຖືກຕ້ອງຕາມການອອກແບບ ແລະ ໄດ້ຮັບການຢັ້ງຢືນດ້ານເຕັກນິກອາຄານໂຮງງານ ຈາກວິສາວະກອນວິຊາສະເພາະ ແລະ ບໍລິສັດອອກແບບກໍ່ສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງ ຄ.ຂ.ປ.ກ ແລະ ຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງໂຮງງານ.

7.2.2. ຕ້ອງຈັດໃຫ້ມີກໍາມະວິທີການຜະລິດ, ການປຸງແຕ່ງ ແບບເປັນລະບົບຕ່ອງໂສ້ທີ່ບໍ່ສັບສົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

7.2.3. ຕ້ອງຕິດຕັ້ງລະບົບໄຟຟ້າທີ່ຮັບປະກັນຄວາມປອດໄພ ເຊັ່ນ: ລະບົບໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ...

7.2.4. ເນື້ອທີ່ອາຄານໂຮງງານ.

- ອາຄານໂຮງງານປຸງແຕ່ງໄມ້ລະດັບ 1 ຕ້ອງມີເນື້ອທີ່ 2.400 ຕາແມັດຂຶ້ນໄປ.
- ອາຄານໂຮງງານປຸງແຕ່ງໄມ້ລະດັບ 2 ຕ້ອງມີເນື້ອທີ່ 1.500 ຕາແມັດຂຶ້ນໄປ.
- ອາຄານໂຮງງານປຸງແຕ່ງໄມ້ລະດັບ 3 ຕ້ອງມີເນື້ອທີ່ 800 ຕາແມັດຂຶ້ນໄປ.

## 7.3. ມາດຕະຖານດ້ານເຄື່ອງຈັກ ແລະ ເຕັກໂນໂລຊີປຸງແຕ່ງໄມ້.

ບັນດາໂຮງງານອຸດສາຫະກໍາປຸງແຕ່ງໄມ້ ແຕ່ລະປະເພດ ຕາມທີ່ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຕິດຕັ້ງເຄື່ອງຈັກ, ເຄື່ອງມືອຸປະກອນທີ່ຈໍາເປັນໃຫ້ເປັນລະບົບຕ່ອງໂສ້ການຜະລິດ ແລະ ຕິດຕັ້ງໃຫ້ຖືກຕາມມາດຕະຖານເຕັກນິກ ເພື່ອຄວາມປອດໄພໃນເວລານໍາໃຊ້.

7.3.1. ໂຮງງານປຸງແຕ່ງໄມ້ປະເພດໜຶ່ງ (ໂຮງງານເລື່ອຍໄມ້) ຕ້ອງຕິດຕັ້ງເຄື່ອງຈັກແຕ່ລະຊະນິດ ຄືດັ່ງນີ້:

1- ເຄື່ອງຈັກເລື່ອຍສາຍພານທາງນອນ ຫຼື ສາຍພານທາງຕັ້ງ ຢ່າງໜ້ອຍ 1 ເຄື່ອງ.

2- ເຄື່ອງຈັກ(ໂຕະ)ເລື່ອຍວົງເດືອນ ຢ່າງໜ້ອຍ 1 ເຄື່ອງ.

4- ເຄື່ອງຈັກ(ໂຕະ)ປາດໜ້າ ຢ່າງໜ້ອຍ 1 ເຄື່ອງ.

5- ເຄື່ອງຈັກ(ໂຕະ)ຊອຍ ຢ່າງໜ້ອຍ 1 ເຄື່ອງ.

6- ເຄື່ອງຈັກຝົນແຂ້ວເລື່ອຍ, ເຄື່ອງຈັກເບັດແຂ້ວເລື່ອຍ ຢ່າງໜ້ອຍໜຶ່ງຊຸດ.

7- ຕິດຕັ້ງລະບົບເຄື່ອງຍົກ(ເຄຣນ) ທີ່ໃຊ້ດ້ວຍໄຟຟ້າ ຢູ່ໃນຂອດງານທີ່ຈຳເປັນ ຢ່າງໜ້ອຍ 1 ເຄື່ອງ ແລະ ມີຄວາມສາມາດຍົກໄດ້ 3 ໂຕນຂຶ້ນໄປ.

8- ເຕົາອົບໄມ້ ດ້ວຍລະບົບໄຟຟ້າ ຫຼື ໝໍ້ອາຍນ້ຳ (ເຕົາສະຕີມ) ທີ່ນຳໃຊ້ນ້ຳມັນເຕົາ, ຟືນ, ຂີ້ເລື່ອຍ... ຢ່າງໜ້ອຍ 1 ເຕົາ (ສຳລັບໄມ້ທີ່ຈຳເປັນອົບ).

ບັນດາເຄື່ອງຈັກດັ່ງກ່າວ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ, ນຳໃຊ້ເທັກໂນໂລຊີທັນສະໄໝ ແລະ ມີຄວາມປອດໄພໃນເວລານຳໃຊ້.

7.3.2. ໂຮງງານປຸງແຕ່ງໄມ້ປະເພດ 2 ( ໂຮງງານປຸງແຕ່ງໄມ້ສຳເລັດຮູບ ) ຕ້ອງຕິດຕັ້ງເຄື່ອງຈັກແຕ່ລະຊະນິດ ຄືດັ່ງນີ້:

1- ເຄື່ອງຈັກເລື່ອຍສາຍພານທາງນອນ ຫຼື ສາຍພານທາງຕັ້ງ ຢ່າງໜ້ອຍ 1 ເຄື່ອງ.

2- ເຄື່ອງຈັກ(ໂຕະ)ເລື່ອຍວົງເດືອນ ຢ່າງໜ້ອຍ 1 ເຄື່ອງ.

3- ເຄື່ອງຈັກ(ໂຕະ)ຕັດວົງເດືອນ ຢ່າງໜ້ອຍ 1 ເຄື່ອງ.

4- ເຄື່ອງຈັກ(ໂຕະ)ປາດໜ້າ ຢ່າງໜ້ອຍ 1 ເຄື່ອງ.

5- ເຄື່ອງຈັກຊອຍ ລະບົບສາຍພານ ຫຼື ວົງເດືອນ ຢ່າງໜ້ອຍ 1 ເຄື່ອງ.

6- ເຄື່ອງຈັກປອກ ຝານ ຢ່າງໜ້ອຍ 1 ເຄື່ອງ.

7- ເຄື່ອງຈັກບິດ ຢ່າງໜ້ອຍ 1 ເຄື່ອງ.

8- ເຄື່ອງຈັກອັດ ຫຼື ໜີບ ຢ່າງໜ້ອຍ 1 ເຄື່ອງ.

9- ເຄື່ອງຈັກຊອຍໂຄ້ງ ຢ່າງໜ້ອຍ 1 ເຄື່ອງ.

10- ເຄື່ອງຈັກກົບ 4 ໜ້າ ຢ່າງໜ້ອຍ 1 ເຄື່ອງ.

11- ເຄື່ອງຈັກກົບ 6 ໜ້າ ຢ່າງໜ້ອຍ 1 ເຄື່ອງ.

12- ເຄື່ອງຈັກຕັດລີ້ນໄມ້(ຕັດມູມ) ຢ່າງໜ້ອຍ 1 ເຄື່ອງ.

13- ເຄື່ອງຈັກປາດເດືອຍ ຢ່າງໜ້ອຍ 1 ເຄື່ອງ.

14- ເຄື່ອງຈັກຕໍ່ໄມ້ຫົວ-ທ້າຍ ຢ່າງໜ້ອຍ 1 ເຄື່ອງ.

15- ເຄື່ອງຈັກຂັດກະດາດຊາຍ ຢ່າງໜ້ອຍ 1 ເຄື່ອງ.

16- ເຄື່ອງຈັກຕໍ່ໄມ້ໜ້າກວ້າງ ຢ່າງໜ້ອຍ 1 ເຄື່ອງ.

17- ເຄື່ອງຈັກຊ່ຽນໄມ້ ຢ່າງໜ້ອຍ 1 ເຄື່ອງ.

18- ເຄື່ອງຈັກໂຣເຕີ ຢ່າງໜ້ອຍ 1 ເຄື່ອງ.

19- ເຄື່ອງຈັກສະຫວ່ານເຈາະຮູທາງຕັ້ງ ຫຼື ທາງນອນ ຢ່າງໜ້ອຍ 1 ເຄື່ອງ.

20- ຕິດຕັ້ງລະບົບເຄື່ອງຈັກດູດຝຸ່ນ ຢ່າງໜ້ອຍ 2 ຊຸດ.

21- ຕິດຕັ້ງລະບົບເຄື່ອງຍົກ(ເຄຣນ) ທີ່ໃຊ້ດ້ວຍໄຟຟ້າ ຢູ່ໃນຂອດງານທີ່ຈຳເປັນ ຢ່າງໜ້ອຍ 2 ເຄື່ອງ ແລະ ມີຄວາມສາມາດຍົກໄດ້ 3 ໂຕນຂຶ້ນໄປ.

22- ເຄື່ອງຈັກຝົນແຂ້ວເລື່ອຍ, ເຄື່ອງຈັກເບັດແຂ້ວເລື່ອຍ (ວົງເດືອນ ແລະ ສາຍພານ) ແລະ ເຄື່ອງຈັກຝົນໃບກົບ.

24- ອ່າງແຊ່ໄມ້ ຢ່າງໜ້ອຍ 1 ອ່າງ (ສຳລັບໄມ້ທີ່ຈຳເປັນແຊ່).

25- ເຕົາອົບໄມ້ ດ້ວຍລະບົບໄຟຟ້າ ຫຼື ໝໍ້ອາຍນ້ຳ (ເຕົາສະຕີມ) ທີ່ນຳໃຊ້ນ້ຳມັນເຕົາ, ຟືນ, ຂີ້ເລື່ອຍ... ຢ່າງໜ້ອຍ 1 ເຕົາ (ສຳລັບໄມ້ທີ່ຈຳເປັນອົບ).

ບັນດາເຄື່ອງຈັກດັ່ງກ່າວ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ, ນຳໃຊ້ເທັກໂນໂລຊີທັນສະໄໝ ແລະ ມີຄວາມປອດໄພ ໃນເວລານຳໃຊ້.

7.3.3. ໂຮງງານປຸງແຕ່ງໄມ້ປະເພດສາມ ( ໂຮງງານເຟີນິເຈີ ແລະ ໂຮງງານຜະລິດເຄື່ອງໃຊ້ສອຍດ້ວຍໄມ້ ) ຕ້ອງຕິດຕັ້ງເຄື່ອງຈັກ ຄືດັ່ງນີ້:

1- ເຄື່ອງຈັກຊອຍສາຍພານ ຫຼື ວົງເດືອນ ຢ່າງໜ້ອຍ 1 ເຄື່ອງ.

2- ເຄື່ອງຈັກປາດເດືອຍ ຢ່າງໜ້ອຍ 1 ເຄື່ອງ.

3- ເຄື່ອງຈັກຕັດສົ້ນໄມ້ ຢ່າງໜ້ອຍ 1 ເຄື່ອງ.

4- ເຄື່ອງຈັກຕັດຫົວທ້າຍ ຢ່າງໜ້ອຍ 1 ເຄື່ອງ.

5- ເຄື່ອງຈັກຕໍ່ໄມ້ ຢ່າງໜ້ອຍ 1 ເຄື່ອງ.

6- ເຄື່ອງຈັກຂັດກະດາດຊາຍ ຢ່າງໜ້ອຍ 1 ເຄື່ອງ.

7- ເຄື່ອງຈັກຕໍ່ໄມ້ໜ້າກວ້າງ ຢ່າງໜ້ອຍ 1 ເຄື່ອງ.

8- ເຄື່ອງຈັກກົບ 4 ໜ້າ ຢ່າງໜ້ອຍ 1 ເຄື່ອງ.

9- ເຄື່ອງຈັກກົບ 6 ໜ້າ ຢ່າງໜ້ອຍ 1 ເຄື່ອງ.

10- ເຄື່ອງຈັກໂຣເຕີ ຢ່າງໜ້ອຍ 1 ເຄື່ອງ.

11- ເຄື່ອງຈັກສະຫວ່ານເຈາະຮູທາງຕັ້ງ ຫຼື ທາງນອນ ຢ່າງໜ້ອຍ 1 ເຄື່ອງ.

12- ຕິດຕັ້ງລະບົບເຄື່ອງຈັກດູດຝຸ່ນ ຢ່າງໜ້ອຍ 1 ຊຸດ.

13- ຕິດຕັ້ງລະບົບເຄື່ອງຍົກ(ເຄຣນ) ທີ່ໃຊ້ດ້ວຍໄຟຟ້າ ຢູ່ໃນຂອດງານທີ່ຈຳເປັນ ຢ່າງໜ້ອຍ 1 ເຄື່ອງ ແລະ ມີຄວາມສາມາດຍົກໄດ້ 2 ໂຕນຂຶ້ນໄປ.

14- ເຄື່ອງຈັກປ້ຳລົມ ຢ່າງໜ້ອຍ 1 ຊຸດ.

15- ເຄື່ອງຈັກຝົນແຂ້ວເລື່ອຍ, ເຄື່ອງຈັກເບັດແຂ້ວເລື່ອຍ, ເຄື່ອງຈັກຝົນໃບກົບ ຢ່າງໜ້ອຍ 1 ຊຸດ.

16- ເຕົາອົບໄມ້ ດ້ວຍລະບົບໄຟຟ້າ ຫຼື ໝໍ້ອາຍນ້ຳ (ເຕົາສະຕີມ) ທີ່ນຳໃຊ້ນ້ຳມັນເຕົາ, ຟືນ, ຂີ້ເລື່ອຍ... ຢ່າງໜ້ອຍ 1 ເຕົາ (ສຳລັບໄມ້ທີ່ຈຳເປັນອົບ).

ບັນດາເຄື່ອງຈັກດັ່ງກ່າວ ຕ້ອງຕິດຕັ້ງໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ, ມີລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ, ນຳໃຊ້ເທັກໂນໂລຊີທັນສະໄໝ ແລະ ມີຄວາມປອດໄພໃນເວລານຳໃຊ້.

<u>ມາດຕາ 8</u>: ມາດຕະຖານດ້ານວິຊາການເຕັກນິກ ແລະ ຄົນງານ

8.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງປະກອບມີບຸກຄະລາກອນທີ່ມີຄຸນນະວຸດທິ ແລະ ສອດຄ່ອງກັບແຕ່ລະຕຳແໜ່ງງານ. ມີວິຊາການວິຊາສະເພາະທີ່ມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນ ຮັບຮອງດ້ານເຕັກນິກວິຊາການທີ່ຖືກຕ້ອງ ປະຈຳຢູ່ໂຮງງານ ຢ່າງໜ້ອຍ 1 ຄົນ. ສຳລັບໂຮງງານທີ່ນຳໃຊ້ເຄື່ອງຈັກພິເສດ ຕ້ອງມີວິຊາການສະເພາະທີ່ມີໃບຢັ້ງຢືນກ່ຽວກັບການນຳໃຊ້ເຄື່ອງຈັກພິເສດນັ້ນ ຢ່າງໜ້ອຍ 1 ຄົນ.

8.2. ວິຊາການເຕັກນິກ ແລະ ຄົນງານ ຕ້ອງໄດ້ຜ່ານການຝຶກອົບຮົມ ຍົກລະດັບທາງດ້ານວິຊາການຢ່າງເປັນປະຈຳ.

<u>ມາດຕາ 9</u>: ມາດຕະຖານດ້ານຄວາມປອດໄພ, ສຸຂະອະນາໄມ ແລະ ສິ່ງແວດລ້ອມ

9.1 ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງມີໜ່ວຍງານບໍລິຫານຄວາມປອດໄພຢູ່ໃນໂຮງງານ ເພື່ອຫຼີກລ້ຽງອຸປະຕິເຫດແຮງງານ, ພະຍາດອາຊີບ ແລະ ສຸຂະພາບຂອງຄົນງານ.

9.2 ຕ້ອງຕິດຕັ້ງເຄື່ອງປ້ອງກັນອັນຕະລາຍຈາກເຄື່ອງຈັກ ເຊັ່ນ: ປ້າຍເຕືອນ, ປ້າຍຫ້າມ ໃສ່ສະຖານທີ່ທີ່ເປັນອັນຕະລາຍ ແລະ ພ້ອມທັງມີແຜນການບຳລຸງຮັກສາເຄື່ອງຈັກ ອຸປະກອນເປັນປະຈຳ.

9.3 ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟ ແລະ ມີຄວາມພ້ອມໃນເວລານຳໃຊ້.

9.4 ຕ້ອງປະກອບອຸປະກອນປ້ອງກັນແຮງງານໃຫ້ແກ່ຄົນງານ ເຊັ່ນ: ເຄື່ອງປ້ອງກັນຝຸ່ນ, ກິ່ນ, ແສງ, ສຽງ, ເກີບ, ໝວກ, ສົບມື ( ຂຶ້ນຢູ່ກັບຄວາມຈຳເປັນຂອງແຕ່ລະຂອດງານ ) ແລະ ມີຊຸດເຄື່ອງແບບ ທີ່ເປັນສັນຍາລັກຂອງໂຮງງານ.

9.5 ຕ້ອງຈັດໃຫ້ມີນ້ຳດື່ມສະອາດ,ຕູ້ຢາສຸກເສີນ,ຫ້ອງນ້ຳ,ຫ້ອງປ່ຽນຖ່າຍເຄື່ອງນຸ່ງໃຫ້ພຽງພໍຕາມຄວາມເໝາະສົມຢູ່ໃນໂຮງງານ.

9.6 ຕ້ອງຕິດຕັ້ງລະບົບລະບາຍອາກາດໃຫ້ພຽງພໍ, ບໍ່ແອອັດ, ມີຄວາມເປັນລະບຽບຮຽບຮ້ອຍດີ ແລະ ຈັດໃຫ້ມີແສງສະຫວ່າງພຽງພໍ.

9.7 ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ໂຮງງານປຸງແຕ່ງໄມ້ທຸກປະເພດ ຕ້ອງມີລະບົບບຳບັດສິ່ງເສດເຫຼືອຈາກໂຮງງານ ເຊັ່ນ: ເສດໄມ້, ເສດຂີ້ເລື່ອຍ, ເສດຂີ້ກົບ ແລະ ນ້ຳເສັຍຄຸນ.

9.8 ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1222/ອຫ, ລົງວັນທີ 7/12/05 , ກໍ່ຄືປະຕິບັດລະບຽບການສິ່ງແວດລ້ອມໂຮງງານ ເຊັ່ນ: ສຽງ, ຂີ້ຝຸ່ນ, ນ້ຳເປື້ອນ, ຄວັນ, ກິ່ນ , ສິ່ງເສດເຫຼືອ, ຄວາມສັ່ນສະເທືອນ, ການສັນຈອນ ແລະ ອື່ນໆ.

<u>ມາດຕາ 10</u>: ມາດຕະຖານດ້ານການບໍລິຫານ ແລະ ການປຸງແຕ່ງໄມ້

10.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງມີລະບົບການຈັດຕັ້ງຄຸ້ມຄອງໂຮງງານເປັນຢ່າງດີ. ມີລະບົບການບໍລິຫານໂຮງງານ, ມີລະບົບຈັດການດ້ານການຜະລິດ, ການເພີ້ມຜະລິດຕະພາບ ແລະ ການພັດທະນາຜະລິດຕະພັນໂຮງງານ.

10.2. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງມີມາດຕະຖານເຕັກໂນໂລຊີປຸງແຕ່ງໄມ້ທີ່ຢັ້ງຢືນຈາກວິສາວະກອນສະເພາະ ຫຼື ຈາກວິສາວະກອນອື່ນທີ່ໄດ້ຮັບຮູ້ຈາກກະຊວງອຸດສາຫະກຳ ແລະ ການຄ້າ ແນໃສ່ໃຫ້ຮັບປະກັນ ຄຸນນະພາບ ແລະ ມາດຕະຖານ ເພື່ອຕອບສະໜອງໃຫ້ຕະຫຼາດພາຍໃນ ແລະ ຕ່າງປະເທດ.

<u>ມາດຕາ 11</u>: ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້

ໂດຍປະຕິບັດຕາມຄຳສັ່ງເລກທີ່ 31/ນຍ, ລົງວັນທີ 23/8/06, ຂໍ້ທີ່ 6, 7, 8, 9, 10, 11 ແລະ 12 ໃຫ້ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ດັ່ງລຸ່ມນີ້:

11.1. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ທຸກລະດັບ ລວມທັງໂຮງງານປຸງແຕ່ງໄມ້ແບບຄອບຄົວ ທີ່ຕ່ຳກວ່າ 5 ແຮງມ້າ ແລະ ຕ່ຳກວ່າ 10 ຄົນລົງມາ ແລະ ໂຮງງານສາຂາຂອງໂຮງງານໃຫຍ່ ຊຶ່ງບໍ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານຕາມລະບຽບການອຸດສາຫະກຳປຸງແຕ່ງ, ຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ.

11.2. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກລະດັບ ລວມທັງໂຮງງານປຸງແຕ່ງໄມ້ແບບຄອບຄົວ ທີ່ຕ່ຳກວ່າ 5 ແຮງມ້າ ແລະ ຕ່ຳກວ່າ 10 ຄົນລົງມາ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນຖືກຕ້ອງ ແຕ່ມາດຕະຖານບໍ່ທັນຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 7, 8, 9, 10 ຂອງຂໍ້ຕົກລົງສະບັບນີ້, ໃຫ້ປະຕິບັດຕາມແຕ່ລະກໍລະນີດັ່ງນີ້:

- ສຳລັບໂຮງງານທີ່ເຄື່ອນໄຫວບໍ່ຖືກຕ້ອງ ຕາມຈຸດປະສົງການອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ.
- ສຳລັບໂຮງງານທີ່ເຄື່ອນໄຫວຖືກຕ້ອງຕາມຈຸດປະສົງ ຂອງການອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງປັບປຸງໂຮງງານໃຫ້ໄດ້ຕາມມາດຕະຖານທີ່ລະບຸໄວ້ ພາຍໃນກຳນົດເວລາໜຶ່ງປີ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ ແລະ ແຈ້ງໃຫ້ເຈົ້າໜ້າທີ່ກວດກາໂຮງງານເພື່ອຮັບຮອງເອົາ. ຖ້າບໍ່ດັ່ງນັ້ນ ຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

11.3. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທີ່ໄດ້ຮັບອະນຸຍາດແລ້ວ ແຕ່ຜູ້ນັ້ນມອບໃຫ້ບຸກຄົນອື່ນ ຊຶ່ງເປັນຄົນລາວ ຫຼື ຄົນຕ່າງປະເທດເປັນຜູ້ດຳເນີນກິດຈະການໂຮງງານ ທີ່ເຫັນວ່າບໍ່ສອດຄ່ອງຕາມລະບຽບ ກົດໝາຍຕ້ອງປິດກິດຈະການ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ.

11.4. ສຳລັບໂຮງງານປຸງແຕ່ງໄມ້ປະເພດໜຶ່ງ ( ໂຮງງານເລື່ອຍໄມ້ ) ທີ່ດຳເນີນການຜະລິດເລື່ອຍໄມ້ແຕ່ຢ່າງດຽວ ຕ້ອງເຮັດຂໍ້ຜູກພັນສັນຍາຄືນໃໝ່ ເພື່ອຊອກຫາວິທີທາງປັບປຸງໂຮງງານຂອງຕົນ ໃຫ້ກ້າວຂຶ້ນເປັນໂຮງງານປະເພດສອງ ຫຼື ປະເພດສາມ ໂດຍສ້າງແຜນການປັບປຸງລະອຽດໃຫ້ສຳເລັດພາຍໃນໜຶ່ງປີ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ, ຖ້າບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

11.5. ສຳລັບໂຮງງານທີ່ໄດ້ຕັ້ງຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ ແລະ ເຂດຫວງຫ້າມທາງການ, ຊຶ່ງບໍ່ໄດ້ມາດຕະຖານ ຕາມທີ່ກຳນົດໄວ້ໃນມາດຕາ 7, ຂໍ້ 7.1.1 ຕ້ອງໄດ້ຍົກຍ້າຍໂຮງງານໄປໃນເຂດອຸດສາຫະກຳ ຫຼື ສະຖານທີ່ແຫ່ງອື່ນທີ່ຖືກຕ້ອງຕາມລະບຽບການກ່ຽວຂ້ອງ ພາຍໃນກຳນົດໜຶ່ງປີ ນັບແຕ່ມື້ປະກາດໃຊ້ຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ, ຖ້າບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

11.6. ສຳລັບໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຕາມລະບຽບກົດໝາຍ ແລະ ຢູ່ໃນໄລຍະການກໍ່ສ້າງໂຮງງານ ຕ້ອງໄດ້ມີການກວດກາຕາມລະບຽບການທີ່ກ່ຽວຂ້ອງ ຄືນໃໝ່ ແລະ ຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້ໃນມາດຕາ 7, 8, 9, 10 ຂອງຂໍ້ຕົກລົງສະບັບນີ້ ກໍ່ຄືລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດດຳເນີນກິດຈະການໂຮງງານຕາມລະບຽບການ ໃນຂັ້ນຕໍ່ໄປ.

11.7. ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ທີ່ໄດ້ຮັບ

ປຸງແຕ່ງໄມ້ ໃຫ້ຖືກຕ້ອງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 125/ນຍ, ລົງວັນທີ 24/7/03 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ລະບຽບຂອງສະມາຄົມອຸດສາຫະກຳປຸງແຕ່ງໄມ້ ເພື່ອເປັນບ່ອນອີງໃນການສະໜອງໄມ້ ແລະ ດຳເນີນການຜະລິດຕາມທິດທາງລວມຂອງລັດຖະບານ.

## ໝວດທີ III
## ການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້

**ມາດຕາ 12: ການດຳເນີນກິດຈະການໂຮງງານ**

ທຸກໆການດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ຂັ້ນໜຶ່ງ, ຂັ້ນສອງ ແລະ ຂັ້ນສາມ ຕ້ອງປະຕິບັດຕາມຂໍ້ຕົກລົງສະບັບນີ້, ລະບຽບການ ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 13: ການສ້າງແຜນການຜະລິດຂອງໂຮງງານອຸດສາຫະກຳປຸງແຕ່ງໄມ້**

ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງສ້າງແຜນການຜະລິດ ແລະ ແຜນການຈຳໜ່າຍປະຈຳປີຂອງຕົນ ຕາມລະບຽບການຂອງກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລ້ວສົ່ງມາຍັງກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ) ກ່ອນວັນທີ່ 15 ເດືອນ ມັງກອນ ຂອງທຸກໆປີ ພ້ອມທັງສະຫຼຸບລາຍງານຜົນຂອງການຈັດຕັ້ງປະຕິບັດແຜນການຂອງປີຜ່ານມາ.

ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາ ຄວາມຕ້ອງການດ້ານວັດຖຸດິບ ສຳລັບປ້ອນໂຮງງານ, ໂດຍຜ່ານການຢັ້ງຢືນຈາກກຸ່ມອຸດສາຫະກຳປຸງແຕ່ງໄມ້ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ຜ່ານການຄົ້ນຄວ້າຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ຊຶ່ງອີງໃສ່ແຜນການຜະລິດ, ມາດຕະຖານ ແລະ ເງື່ອນໄຂຂອງໂຮງງານ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ຕົກລົງສະບັບນີ້ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດສັນ ແບ່ງປັນໂກຕາໄມ້ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 14: ການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້**

ໂຮງງານອຸດສາຫະກຳປຸງແຕ່ງໄມ້ທຸກປະເພດ ຕ້ອງປະຕິບັດລະບຽບການ ສະເພາະຂອງກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ກະຊວງກະສິກຳ-ປ່າໄມ້ ກ່ຽວກັບການອອກອະນຸຍາດ, ເອກະສານກຳກັບການເຄື່ອນຍ້າຍໄມ້ ແລະ ຜະລິດຕະພັນໄມ້ ຢູ່ພາຍໃນປະເທດ ແລະ ສົ່ງອອກຕ່າງປະເທດ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15: ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຖືກຕ້ອງຕາມມາດຕະຖານ ແລະ ມີ

ພັນສຳເລັດຮູບທີ່ໄດ້ມາດຕະຖານ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ຈະໄດ້ຮັບພິຈາລະນາສົ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອຸດສາຫະກຳ ປຸງແຕ່ງສະບັບເລກທີ 67/ນຍ, ລົງວັນທີ 12/4/06 ແລະ ນະໂຍບາຍຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຈະໄດ້ຮັບການພິຈະລະນາຍ້ອງຍໍຕາມ ມາດຕາ 52 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ.

ມາດຕາ 16: ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ຫຼື ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ໂດຍສະເພາະ ການດັດສົມໂຮງງານປຸງແຕ່ງໄມ້ທີ່ກຳນົດໄວ້ໃນມາດຕາ 11, ຈະຖືກປະຕິບັດມາດຕະການທາງອາຍາ ແລະ ມາດຕະການໂທດເພີ້ມ ຕາມມາດ ຕາ 57 ແລະ ມາດຕາ 58 ຂອງກົດໝາຍວ່າ ດ້ວຍອຸດສາຫະກຳປຸງແຕ່ງ.

## ໝວດທີ V
## ຂໍ້ກຳນົດມ້ວນທ້າຍ

ມາດຕາ 17: ການຈັດຕັ້ງປະຕິບັດ

ມອບໃຫ້ກົມອຸດສາຫະກຳ ເປັນຜູ້ຊີ້ນຳ, ຕິດຕາມ ກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບ ກັບລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

ມາດຕາ 18: ຜົນສັກສິດ ແລະ ການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການ ກ່ຽວກັບໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ປ່ຽນແທນ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳແລະການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ.